# FSET ແມ່ນຫຍັງ?

FoodShare Employment and Training (FSET) (ໂຄງການການຈ້າງງານແລະການຝຶກອາຊີບ FoodShare) ເປັນໂຄງການຟຣີທີ່ຊ່ວຍໃຫ້ສະມາຊິກຂອງ FoodShare ໄດ້ສ້າງທັກສະອາຊີບ, ຊອກວຽກ, ແລະສ້າງຄວາມກ້າວໜ້າໃນອາຊີບ.

FSET ຈະປະເມີນຂໍ້ດີ, ສິ່ງທີ່ທ່ານຕ້ອງມີ, ແລະຄວາມຕ້ອງການຂອງທ່ານ ເພື່ອຊ່ວຍໃຫ້ທ່ານໄດ້ວຽກ.

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບໂຄງການ, ກະລຸນາໄປທີ່ເວັບໄຊ້ www.dhs.wisconsin.gov/foodshare/fset.htm.




## ຄຳກ່າວສະແດງການບໍ່ແບ່ງແຍກ

ຕາມກົດໝາຍສິດທິພົນລະເມືອງຂອງລັດຖະບານກາງ ແລະ ການຄວບຄຸມແລະນະໂຍບາຍສິດທິພົນລະເມືອງກະຊວງກະສິກຳສະຫະລັດອາເມລິກາ (USDA), ລວມເຖິງ ຕົວແທນ, ຫ້ອງການ, ແລະລູກຈ້າງຂອງ USDA, ແລະສະຖາບັນທີ່ເຂົ້າຮ່ວມ, ຫຼື ປົກຄອງໂຄງການຂອງ USDA, ຖືກສັ່ງຫ້າມການເລືອກປະຕິບັດທີ່ມີເຫດມາຈາກ ເຊື້ອຊາດ, ສີຜິວ, ປະເທດຕົ້ນກຳເນີດ, ເພດ, ຄວາມເຊື່ອດ້ານສາດສະນາ, ຄວາມພິການ, ອາຍຸ, ຄວາມເຊື່ອດ້ານການເມືອງ, ຫຼື ການແກ້ແຄ້ນຈາກການເຮັດກິດກະກຳດ້ານສິດທິພົນລະເມືອງກ່ອນໜ້າໃນໂຄງການຫຼືກິດຈະກຳທີ່ USDA ຈັດຂຶ້ນ.

ພິການທີ່ຕ້ອງການວິທີສື່ສານທາງເລືອກເພື່ອເບິ່ງຂໍ້ມູນຂອງໂຄງການ (ຕົວຢ່າງເຊັ່ນ ອັກສອນເບຣລ, ຕົວຫຼັງສືຂະໜາດໃຫຍ່, ເທັບສຽງ, ຫຼື ພາສາມືອາເມລິກາ ເປັນຕົ້ນ), ສາມາດຕິດຕໍ່ຕົວແທນ (ຂອງລັດ ຫຼື ຂອງທ້ອງຖິ່ນ) ທີ່ພວກເຂົາສະໝັກຂໍຮັບປະໂຫຍດ. ຜູ້ທີ່ຫູໜວກ, ມີບັນຫາການໄດ້ຍິນ, ຫຼືບັນຫາການປາກເວົ້າ ສາມາດຕິດຕໍ່ USDA ໄດ້ທີ່ Federal Relay Service (ບໍລິການຣີເລຂອງລັດຖະບານກາງ) ໄດ້ທີ່ (800) 877-8339 ນອກຈາກນີ້ ຍັງມີຂໍ້ມູນໂຄງການເປັນພາສາອື່ນນອກຈາກພາສາອັງກິດນຳດ້ວຍ.

ຖ້າທ່ານຕ້ອງການສົ່ງຄຳຮ້ອງຮຽນກ່ຽວກັບການເລືອກປະຕິບັດ, ກະລຸນາເຕີມຂໍ້ມູນໃນແບບຟອມ USDA Program Discrimination Complaint Form (AD-3027) ທີ່ສາມາດຫາໄດ້ທີ່ https://www.ascr.usda.gov/how-file-program-discrimination-complaint ແລະທີ່ຫ້ອງການ USDA ທຸກແຫ່ງ, ຫຼືຂຽນຈົດໝາຍສົ່ງໄປທີ່ USDA ແລະໃສ່ຂໍ້ມູນທີ່ຕ້ອງເຕີມໃນແບບຟອມມານຳດ້ວຍ. ຖ້າທ່ານຕ້ອງການຂໍແບບຟອມການຮ້ອງຮຽນ, ຖະລຸນາໂທໄປທີ່ (866) 632-9992. ສົ່ງແບບຟອມທີ່ເຕີມຂໍ້ມູນແລ້ວໄປຫາ USDA ທີ່

(1) ຈົດໝາຍ: U.S. Department of Agriculture
Office of the Assistant Secretary for Civil Rights
1400 Independence Avenue, SW
Washington, D.C. 20250-9410;

(2) ແຟັກ: (202) 690-7442; ຫຼື

(3) ອີເມລ: program.intake@usda.gov.

ສະຖາບັນນີ້ແມ່ນໃຫ້ບໍລິການທີ່ເທົ່າທຽມກັນທຸກຄົນ.

WISCONSIN DEPARTMENT of HEALTH SERVICES
Division of Medicaid Services
P-02103L (04/2018)




# FSET
# ການຈ້າງງານແລະ ການຝຶກອາຊີບ
## FoodShare

# ຈະສະໝັກ FoodShare ໄດ້ແນວໃດ

ໃນການເຂົ້າຮ່ວມໃນໂຄງການ FSET, ທ່ານຕ້ອງກຳລັງຮັບສະຫວັດດີການ FoodShare ຢູ່. FoodShare ຊ່ວຍໃຫ້ຜູ້ທີ່ມີເງິນຈຳກັດໄດ້ຊື້ອາຫານທີ່ເຂົາເຈົ້າມີຄວາມຈຳເປັນຕ້ອງກິນເພື່ອສຸຂະພາບທີ່ດີ.

ຖ້າທ່ານບໍ່ໄດ້ຮັບສະຫວັດດີການ FoodShare ຢູ່ ແຕ່ທ່ານຄິດວ່າທ່ານອາດຈະຮັບສະຫວັດດີການໄດ້ ເນື່ອງຈາກທ່ານມີລາຍໄດ້ໜ້ອຍຫຼືບໍ່ມີວຽກ, ມີຫຼາຍຫົນທາງທີ່ຈະຫາຄຳຕອບໄດ້:

**ອອນໄລນ໌**

ທ່ານສາມາດສະໝັກທາງອອນໄລນ໌ໄດ້ທີ່ access.wi.gov. ຄລິກທີ່ "Apply for Benefits." (ສະໝັກຂໍສະຫວັດດີການ).

**ໂທລະສັບ**

ທ່ານສາມາດໂທຫາໜ່ວຍງານຕົວແທນຂອງທ່ານ. ໂທໄປທີ່ໝາຍເລກ 1-800-362-3002 ເພື່ອຖາມເອົາເລກໂທໜ່ວຍງານຕົວແທນຂອງທ່ານ.

**ໄປພົບໜ້າດ້ວຍຕົນເອງ**

ທ່ານສາມາດສະໝັກໂດຍໄປພົບໜ້າດ້ວຍຕົນເອງໄດ້. ໂທຫາບໍລິການສະມາຊິກທີ່ 1-800-362-3002 ເພື່ອຖາມເອົາທີ່ຢູ່ໜ່ວຍງານຕົວແທນຂອງທ່ານ ຫຼືໄປທີ່ເວັບໄຊ້ www.dhs.wisconsin.gov/forwardhealth/resources.htm



# ຈະຮັບການສົ່ງຕົວໄປທີ່ FSET ໄດ້ແນວໃດ

ທ່ານກຳລັງຮັບສະຫວັດດີການ FoodShare ຢູ່ຫຼືບໍ່?

**ແມ່ນ**

ຕິດຕໍ່ໂຄງການ FoodShare ຂອງເຄົາຕີ້ທ່ານແລະຂໍຮັບການສົ່ງຕົວໄປທີ່ FSET. ໂທຫາບໍລິການສະມາຊິກທີ່ 1-800-362-3002, ເພື່ອເອົາເລກໂທໜ່ວຍງານຕົວແທນຂອງທ່ານ.

**ບໍ່ແມ່ນ**

ທ່ານຕ້ອງສະໝັກແລະໄດ້ຮັບການອະນຸມັດໃຫ້ຮັບ FoodShare ກ່ອນຈະໄດ້ຮັບການສົ່ງຕົວໄປທີ່ FSET.



# ບໍລິການທີ່ FSET ສະເໜີໃຫ້

## ການຝຶກອາຊີບ

ຕົວຢ່າງການຝຶກອາຊີບທີ່ທ່ານສາມາດເຂົ້າຮ່ວມ:

- ຜູ້ຊ່ວຍພະຍາບານທີ່ໄດ້ຮັບການຮັບຮອງ (CNA)
- ຄນົຂບັລດົຍກົ
- ບໍລິການລູກຄ້າ
- ການຄວບຄຸມເຄື່ອງຈັກດ້ວຍລະບົບຕົວເລກຄອມພິວເຕີ (CNC)

## ການສຶກສາ

FSET ອາດຈະສະເຫນີການສຶກສາຊະນິດຕ່າງ ໆ ດັ່ງນີ້:

- ໃບປະກາດຄຸນະວຸດການສຶກສາທົ່ວໄປ (GED)
- ໃບປະກາດທຽບເທົ່າມັດທະຍົມປາຍ (HSED)
- ອະນຸປະລນິຍາໃນສາຂາທມີຄືວາມຕອ້ງການສງູ
- ພາສາອັງກິດເປັນພາສາທີ່ສອງ

## ຄວາມຊ່ວຍເຫຼືອໃນການຊອກວຽກ

- ຈົດໝາຍສະໝັກງານແລະປະຫວັດການເຮັດວຽກ
- ທັກສະການສຳພາດວຽກ
- ການເຂົ້າເຖິງການປະກາດຮັບສະໝັກງານ

## ຄວາມຊ່ວຍເຫຼືອອື່ນ ໆ

FSET ອາດຈະຊ່ວຍທ່ານຈ່າຍຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບວຽກ ຢ່າງເຊັ່ນ:

- ບັດຂຶ້ນລົດເມຫຼືເງິນຄ່ານໍ້າມັນລົດ
- ເຄື່ອງນຸ່ງສຳລັບການສຳພາດວຽກ
- ເຄື່ອງແບບສຳລັບການຝຶກວຽກ
- ເຄື່ອງມືສຳລັບເຮັດວຽກ